# ຄອບຄົວແສນແພງ



ດາຣາ ກັນລະຍາ

# ຄອບຄົວແສນແພງ



ເລື່ອງ: ດາຣາ ກັນລະຍາ

ຮູບປະກອບ: ແສງສຸລິ ກັດຕິຍະສັກ

2011

# ຄອບຄົວແສນແພງ

ໂດຍ: ດາຣາ ກັນລະຍາ

ຮູບປະກອບ: ແສງສຸລິ ກັດຕິຍະສັກ

ບັນນາທິການ: ດວງເດືອນ ບຸນຍາວົງ

ອອກແບບຈັດໜ້າ: ສຸກພັນສາ ພູຜາສຸກ

ຈັດພິມ ແລະ ຈຳໜ່າຍ:

ດອກເກດ
DokkeD

ສຳນັກພິມດອກເກດ
ຖະໜົນຮ່ອງແກ-ໂພນທັນ ບ້ານໂພນທັນ,
ເມືອງໄຊເຊດຖາ
ນະຄອນຫຼວງວຽງຈັນ, ສ.ປ.ປລາວ
ໂທລະສັບ: 020 2220 4895

ອຸປຖຳໂດຍ: M-Point Mart DATA COM

ທະບຽນອະນຸຍາດ ເລກທີ: 320 ພຈ 10102011
ພິມຄັ້ງທີ 1, ວຽງຈັນ ສ.ປ.ປ ລາວ, ຕຸລາ 2011
ຈຳນວນ: 3000 ຫົວ
ພິມທີ່: ໂຮງພິມ ລາວ ຢູນິພຣິນ ຈຳກັດ

ສະຫງວນລິຂະສິດ © ດາຣາ ກັນລະຍາ, 2011

# ສາລະບັນ


ຄຸນຄ່າຂອງການເປັນພໍ່ແມ່ - ໗

ຈາກຫົວໃຈ ຂອງເດັກນ້ອຍ ຜູ້ຊື່ນບານ - ໑໔

ຄວາມໝາຍໃໝ່ຂອງຄອບຄົວ - ໑໘

ໄປຂໍເຮືອນຂ້ອຍແມ້ - ໔໐

ພໍ່ທີ່ມີຄວາມສຸກ - ໔໔

ຍາແມ່ໃຈດີ - ໔໖

ສອນລູກໃຫ້ມີລະບຽບ - ໔໗

ເຮືອນຮ້າງ - ໓໘

ຊື່ລູກ ສຽງສະຫວັນຂອງພໍ່ແມ່ - ໓໖

ຄວາມງາມຂອງແມ່ - ໕໐

ແມ່ຢ່າໄຫ້ - ໕໑

ສອນພາສາ ພາອ່ານ - ໕໔

ພໍ່ແມ່ນັ້ນລະ ເຮັດເປັນຕົວຢ່າງ ໃຫ້ແກ່ລູກ - ໕໖

ຄຳເວົ້າທີ່ຫຍິ່ງໃຫຍ່ ຈາກຄົນໂຕນ້ອຍໆ - ໕໐

ຕາມໃຈລູກເກີນພໍດີ ມີແຕ່ເສຽ - ໕໔

ແມ່ເອີ້ຍ ຢ່າຈົ່ມຫຼາຍ - ໔໕

ບອກແລ້ວບໍ່ຟັງ - ໔໙

ການເຝິກຝົນທາງສັງຄົມ - ໕໒

ແມ່ເກົ່ງ - ໕໕

ຄວາມສຸກ - ໕໗

ແອບເອົາ - ໕໘

ພາລູກເຂົ້າວັດ - ໗໐

ເຖິງລູກຊາຍທີ່ໃຫຍ່ແລ້ວ - ໗໔

ເພັດຊະຄາດ - ໗໕

# ຄຳນຳ ຂອງສຳນັກພິມ

"ຄອບຄົວແສນແພງ" ແມ່ນໂຮມ ບົດຂຽນຈາກ ລານພໍ່ແມ່ ໃນວາລະສານລານຄຳ ນັບແຕ່ປີ 2007 ສິບຫ້າບົດ ກັບ ກະວີ ທີ່ມີໃຈຄວາມ ກ່ຽວພັນກັບຄອບຄົວອີກຫ້າບົດ ຂອງ ເອື້ອຍດາຣາ ກັນລະຍາ ຜູ້ບໍ່ຍອມປ່ອຍໃຫ້ປະສົບການຊີວິດ ອັນມີຄຸນຄ່າເຫຼົ່ານີ້ ກາຍເປັນເລື່ອງເລົ່າຂານຜ່ານໄປດັ່ງ ສາຍລົມ ແລ້ວມຸດມອດຈົມຫາຍໄປຢ່າງໄຮ້ຮ່ອງຮອຍ.

ນອກຈາກການເດີນທາງຍ່ຳຍ່າງ ຢູ່ໃນຖະໜົນອັກສອນ ແຫ່ງແດນຈຳປາມາເຫິງນານ ໃນຖານະນັກກະວີ ນັກຂຽນນິຍາຍ ສາຍຕາຍາວແຫຼມ ແນມນຳທຸກການເໜັງຕີງເຄື່ອນໄຫວໃນສັງຄົມ ຢ່າງເອົາໃຈໃສ່ຫ່ວງໃຍແລ້ວ ຊີວິດຂອງເອື້ອຍຍັງປ່ຽມລົ້ນດ້ວຍກິດຈະກຳ ການເຄື່ອນໄຫວເພື່ອສັງຄົມ ແລະ ວັດທະນະທຳລາວ ນັບແຕ່ລະດັບຄອບຄົວ ຊຸມຊົນ ໄປຮອດລະດັບຊາດ ແລະສາກົນ.

ດ້ວຍວ່າໄດ້ລ້ຽງດູລູກໆສີ່ຄົນມາຜູ່ດຽວ ພາຍຫຼັງທີ່ສູນເສຍສາມີໄປຕັ້ງແຕ່ລູກຍັງຢູ່ໃນໄວໜຸ່ມ ທີ່ຕ້ອງສຶກສາຮ່ຳຮຽນພຸ້ນ ຈົນລູກໆກາຍມາເປັນສະມາຊິກທີ່ດີຂອງສັງຄົມ ປະເທດຊາດ...ແລະບັດນີ້ບັນດາ ລູກໆກໍມີລູກໆໃຫ້ ໄດ້ເອີ້ນເພິ່ນວ່າ ແມ່ເຖົ້າ ແມ່ໃຫຍ່ ແມ່ຍ່າແມ່ນາຍ... ແລ້ວ, ບົດຮຽນທີ່ ເກັບທ້ອນຈາກຊີວິດຈິງ ຈາກການອ່ານສຶກສາພິຈາລະນາຊີວິດອ້ອມໆຂ້າງ ກໍຖືກກັ່ນຕອງຮ່ອນຈ້ອນອອກມາ ໂຮມໄວ້ໃນປຶ້ມນ້ອຍຫົວນີ້ ພ້ອມກັບຮູບປະກອບ ໜ້າຮັກໆໂດຍສີນີຫຼານຊາຍຄົນນຶ່ງ ເຊິ່ງເບິ່ງວ່າຈະສືບທອດສາຍເລືອດ ສິນລະປິນໄວ້ຢ່າງເຂັ້ມຂຸ້ນພໍສົມຄວນ.

ໂດຍເຊື່ອວ່າ "ຄອບຄົວແສນແພງ" ເປັນສ່ວນທີ່ໜ້າຖະໜອມແພງທີ່ສຸດ ມີຄ່າທີ່ສຸດຂອງທຸກຄອບຄົວ ເປັນສິ່ງທີ່ສະມາຊິກໃນຄອບຄົວສ້າງຂຶ້ນເອງຮ່ວມກັນ ທັງແມ່ນສິ່ງທີ່ຈະໄປຊອກຊື້ຊອກຫາທາງໃດກໍບໍ່ມີຂາຍ.

ອັນທີ່ສຳຄັນທີ່ສຸດ ກໍຄືວ່າ ເນື້ອໃນໃຈຄວາມທີ່ສອດຄ່ອງກັບທິດທາງແລະໜ້າທີ່ຈຸດສຸມໃນຫ້າປີຕໍ່ໜ້າ (2011-2015) ທີ່ກອງປະຊຸມໃຫຍ່ ຄັ້ງທີ IX ຂອງພັກປະຊາຊົນປະຕິວັດລາວ ວາງອອກ

ໃນຂໍ້ ໑. ສອງ ວ່າດ້ວຍຂົງເຂດສັງຄົມວັດທະນະທຳ (ໜ້າ 42) ກ່ຽວກັບການ ພັດທະນາຄົນ ວ່າ ຕ້ອງອີງໃສ່ປັດໄຈຫຼາຍຢ່າງ ແລະ ນຶ່ງໃນນັ້ນ ກໍແມ່ນ ການເຊີດຊູ ສະຖາບັນຄອບຄົວ ນັ້ນເອງ.

ດັ່ງນັ້ນ ຈຶ່ງເປັນໂອກາດວິເສດສຸດ ທີ່ສຳນັກພິມດອກເກດໄດ້ ຈັດພິມ ປຶ້ມຫົວນີ້ອອກມາ ທັນເປັນຂອງຝາກ ຂອງຕ້ອນ ທີ່ມີຄ່າ ເປັນອຳມະຕະ ສຳລັບທຸກໆຄົນ ທີ່ປາຖະໜາ ຢາກເຫັນຄອບຄົວ ຂອງຕົນເປັນ "ຄອບຄົວແສນແພງ" ຢາກປູກຝັງຄວາມຮັກ ຄວາມ ຖະໜອມແພງ ແລະປະຕິບັດ ຕາມຮີດຄອງ ປະເພນີອັນດີງາມ ຢ່າງ ແທ້ຈິງ.

ທີ່ ສຳນັກພິມ ດອກເກດ, ຕຸລາ 2011

ຜູ່ອຳນວຍການ

ດວງເດືອນ ບຸນຍາວົງ

## ຄຸນຄ່າຂອງການເປັນພໍ່ແມ່

24/VII
ບ້ານຈ່າຍ

ຜູ້ຂຽນຈື່ໄດ້ວ່າ ມື້ທີ່ຮູ້ວ່າຕົນເອງຖືພານັ້ນ ແມ່ນເຫດການສຳຄັນໃນຊີວິດ ອີກບັ້ນໜຶ່ງ. ມັນເກີດຂຶ້ນ ພຽງແຕ່ 2-3 ເດືອນຫຼັງຈາກການແຕ່ງດອງ. ທັງທີ່ວ່າ ເມື່ອຕົກລົງໃຈແຕ່ງດອງ ກໍຮູ້ລະວ່າ ຈະໄດ້ລູກ ເປັນເລື່ອງທຳມະດາ ແຕ່ເປັນຫຍັງບາດຮູ້ວ່າ ພວມຈະມີລູກແທ້ ຈຶ່ງເກີດຄວາມຮູ້ສຶກດີເປັນພິເສດ. ມັນມີທັງຄວາມປິຕິຍິນດີ ສົມຫວັງ ເປັນຄວາມຮູ້ສຶກເລີກລ້ຳ ເປັນປະສົບການທີ່ຍິ່ງໃຫຍ່ ແລະມີຄ່າທີ່ສຸດຢ່າງໜຶ່ງໃນຊີວິດ .

ຕໍ່ຈາກນັ້ນ ກໍແມ່ນຄວາມຮູ້ສຶກຮັບຜິດຊອບ ວ່າຕົນຈະມີໜ້າທີ່ໃໝ່ເກີດຂຶ້ນ ນັ້ນຄື ຈະຕ້ອງປະພຶດປະຕິບັດຕົນເປັນແມ່ທີ່ດີ. ຜູ້ເຖົ້າຜູ້ແກ່ເພິ່ນກໍເຕືອນວ່າ "ບັດນີ້ ບໍ່ມີແຕ່ເຈົ້າຜູ້ດຽວ ແລ້ວເນີ້ ເຈົ້າມີອີກຊີວິດໜຶ່ງ ຢູ່ໃນທ້ອງ ຕ້ອງດູແລເຂົາ". ແລ້ວກໍພາໃຫ້ເຮົາມີຄວາມຕັ້ງໃຈ ລະມັດລະວັງດູແລຕົວເອງໃຫ້ດີທີ່ສຸດ. ເລື່ອງອາຫານການກິນ ຕ້ອງເລືອກ "ກິນແນວມີປະໂຫຍດຕໍ່ຮ່າງກາຍລູກ" ເທົ່ານັ້ນ,

ຫຼື ເວັ້ນທຸກສິ່ງທີ່ຈະເກີດໂທດ ຫຼື ທີ່ບໍ່ເປັນປະໂຫຍດນັ້ນຢ່າງເດັດຂາດ. ໃນດ້ານຂອງອາລົມ ເພິ່ນບອກວ່າ ແມ່ຕ້ອງອາລົມດີ ສົດຊື່ນແຈ່ມໃສ ເພື່ອໃຫ້ລູກໃນທ້ອງມີອາລົມດີ ລ້ຽງງ່າຍ. ຄິດກໍຄິດແຕ່ເລື່ອງດີໆ ຕໍ່ຕົນເອງແລະຕໍ່ຄົນໃກ້ຄຽງ ບໍ່ຄິດແງ່ຮ້າຍໃສ່ໃຜເລີຍ. ທຸກເຊົ້າ ຕື່ນແຕ່ເດິກ ໜຶ້ງເຂົ້າໃສ່ບາດເອງ ຢາກເຮັດບຸນ ແລະແອບເຜື່ອແຜ່ຕໍ່ຜູ້ອື່ນຫຼາຍກວ່າທີ່ຜ່ານມາ.

ສະຫຼຸບແລ້ວ ຜູ່ເປັນແມ່ນັ້ນ ຕ້ອງບຳເພັນຕົນເປັນຄົນດີ ທັງກາຍ ໃຈ ອາລົມ ແລະຄວາມຄິດ. ການຖືພາມີລູກແມ່ນສະພາວະທີ່ອຳນວຍ ໃຫ້ຄົນເຮົາກາຍເປັນມະນຸດທີ່ສົມບູນ ມີລະດັບຄວາມນຶກຄິດສູງຂຶ້ນ ແລະສະເພາະຢ່າງຍິ່ງ ແມ່ນຍາມນີ້ເອງທີ່ເຮົາເລີ່ມຮູ້ເມື່ອວ່າ ພໍ່ແມ່ເຮົາມີຄວາມຮູ້ສຶກຕໍ່ເຮົາແນວໃດ ເວລາເຮົາເກີດມາ ແລະເພິ່ນລ້ຽງດູເຮົາມາ, ເຮັດໃຫ້ເຮົາຮັກພໍ່ແມ່ຫຼາຍຂຶ້ນ ແລະຮູ້ສຶກໃນບຸນຄຸນຂອງເພິ່ນຫຼາຍຂຶ້ນໆ ກາຍເປັນຄວາມກະຕັນຍູກະຕະເວທີອັນສູງສົ່ງ.



# ຂໍໂທດຫຼາຍໆ



ປື້ມຫົວດັ່ງກ່າວ ຍັງບໍ່ສາມາດນຳ
ມາເຜີຍແຜ່ໄດ້ ເນື່ອງຈາກຍັງບໍ່
ໄດ້ຮັບການອະນຸຍາດໃຫ້ເຜີຍແຜ່
ໄດ້ຢ່າງເປັນທາງການເທື່ອ...

ດ້ວຍຄວາມຮັກແພງ